Fresno Unified School District
ໃບຟອມອະນຸຍາດຂອງພໍ່ແມ່ສໍາລັບນັກຮຽນໃຊ້ Email
ຂໍ້ເພີ້ມເຕີມຂອງນະໂຍບາຍການໃຊ້ທີ່ພໍຮັບເອົາໄດ້
(Student Email Parent Permission Form
Acceptable Use Policy Addendum)

ນັກຮຽນ________________________________________ ວັນທີ____________________

ໂຮງຮຽນ________________________________________ ຫ້ອງ____________________

ພໍ່ແມ່ແລະນັກຮຽນ ທີ່ຮັກແພງ:

ໜັງສືນີ້ແມ່ນເພື່ອແຈ້ງໃຫ້ທ່ານຮູ້ວ່າຄຣູຂອງລູກທ່ານຈະໃຊ້ ອີແມລ(email) ສໍາລັບບົດຝຶກຫັດຂອງຫ້ອງຮຽນໃນປີນີ້. ເພາະວ່າໂຮງຮຽນແຕ່ງໃຫ້, ຄວາມຮັບຜິດຊອບສ່ວນບຸກຄົນໃນການໃຊ້ email ແມ່ນການເລືອກໃໝ່ຢ່າງນຶ່ງສໍາລັບນັກຮຽນຂອງເຂດໂຮງຮຽນຟເຣສໂນ, ການຮັບຮອງເອົາຂອງທ່ານເປັນສິ່ງຈໍາເປັນສໍາລັບລູກຂອງທ່ານເພື່ອເຂົ້າຮ່ວມ.

ການໃຊ້ email ໂດຍນັກຮຽນສ່ວນບຸກຄົນບໍ່ຖືກລວມໄວ້ໂດຍສະເພາະຢູ່ນະໂຍບາຍການໃຊ້ທີ່ພໍຮັບເອົາໄດ້ຂອງເຂດໂຮງຮຽນຟເຣສໂນ, ທີ່ທ່ານໄດ້ຮັບຮອງເອົາແຕ່ກ່ອນດັ່ງນັ້ນໃບຟອມນີ້ຖືວ່າເປັນຂໍ້ເພີ້ມເຕີມຢ່າງນຶ່ງໃສ່ການຮັບຮອງທີ່ທ່ານໄດ້ຮັບຮອງເອົາແຕ່ກ່ອນກຽ່ວກັບການຊີ້ນໍາໃນການໃຊ້ອິນເທີເນັດແລະສາຍການຕິດຕໍ່ຂອງເຂດໂຮງຮຽນຟເຣສໂນທີ່ມີຢູ່ໃນປື້ມຄູ່ມືພໍ່ແມ່ຂອງເຂດໂຮງຮຽນຟເຣສໂນສົກຮຽນ 2004/2005 ແລະຢູ່ອິນເທີເນັດ [http://www.fresno.k12.ca.us/technology/bp.](http://www.fresno.k12.ca.us/technology/bp.)

ດ້ວຍການອະນຸຍາດຂອງທ່ານ, ລູກຂອງທ່ານຈະຖືກມອບໃຫ້ໃຊ້ຊື່ຂອງລາວເອງແລະຈະຖືກອະນຸຍາດໃຫ້ສົ່ງແລະໄດ້ຮັບ email ຜ່ານຣະບົບ ePALs SchoolMail ທີ່ກັ່ນກອງແລະກວດກາ. ນະໂຍບາຍທັງໝົດຂອງເຂດໂຮງຮຽນຍັງມີຜົນໃຊ້ໄດ້, ແລະຈະໃຊ້ຕາມທີ່ໄດ້ຊີ້ບອກຢູ່ນະໂຍບາຍການໃຊ້ທີ່ພໍຮັບເອົາໄດ້. ຈະໄດ້ໃຊ້ທຸກຄວາມພະຍາຍາມເພື່ອຈັດຫາການໃຊ້ email ທີ່ປອດພັຍແລະປ້ອງກັນຂອງນັກຮຽນ, ແນວໃດກໍຕາມມັນຍັງເປັນຄວາມຮັບຜິດຊອບຂອງຜູ້ໃຊ້ທີ່ຈະປະຕິບັດຕາມກົດຣະບຽບທັງໝົດຂອງໂຮງຮຽນ, ການແນະນໍາຂອງຄຣູ, ແລະວິທີດໍາເນີນການຕ່າງໆແລະລາຍງານກຽ່ວກັບການໃຊ້ຫລືອຸປະກອນເຄື່ອງໃຊ້ທີ່ບໍ່ເໝາະສົມໃຫ້ພະນັກງານໂຮງຮຽນ.

ຕາມທີ່ໄດ້ອະທິບາຍຢູ່ນະໂຍບາຍການໃຊ້ທີ່ພໍຮັບເອົາໄດ້, ການໃຊ້ວິທຍາການ, ສາຍການຕິດຕໍ່, ແລະອິນເທີເນັດຂອງໂຮງຮຽນບໍ່ເປັນສິດສ່ວນຕົວ. ເຂດໂຮງຮຽນຟເຣສໂນມີສິດທີ່ຈະຄົ້ນແລະຫລືກວດກາລາຍຣະອຽດໃດນຶ່ງທີ່ສ້າງຂຶ້ນ, ເປີດເບິ່ງ, ສົ່ງໄປ, ໄດ້ຮັບ, ແລະຫລືຮັກສາໄວ້ຢູ່ໃນຮູບແບບໃດນຶ່ງໂດຍນັກຮຽນຢູ່ອຸປະກອນເຄື່ອງໃຊ້ຂອງໂຮງຮຽນ.

ໂດຍການເຊັນຊື່ຢູ່ຂ້າງລຸ່ມນີ້ ທ່ານຊີ້ບອກໃຫ້ຮູ້ອີກຕື່ມວ່າທ່ານເຂົ້າໃຈແລະຕົກລົງທີ່ຈະປະຕິບັດຕາມນະໂຍບາຍຂອງເຂດໂຮງຮຽນແລະຂອງໂຮງຮຽນຕາມທີ່ໄດ້ບົ່ງໄວ້ຢູ່ຂ້າງເທິງນີ້ແລະຢູ່ນະໂຍບາຍຂອງສະພາປົກຄອງການສຶກສາ(BP) 0440.1 ແລະ 6162.7 ແລະກົດຣະບຽບຝ່າຍບໍຣິຫານທີ່ສນັບສນູນຂອງພວກເຂົາ. ເພື່ອກວດເບິ່ງນະໂຍບາຍທັງໝົດ, ທ່ານຈະຕິດຕໍ່ຫ້ອງການໂຮງຮຽນຂອງທ່ານກໍໄດ້ຫລືເບິ່ງຢູ່ອິນເທີເນັດ [www.fresno.k12.ca.us/technology/bp.](http://www.fresno.k12.ca.us/technology/bp.)

<u>ກະຣຸນາໝາຍໃສ່ບ່ອນນຶ່ງແລະເຊັນຊື່ໃສ່ຂ້າງລຸ່ມ</u>

______ ຂ້າພະເຈົ້າ **ອະນຸຍາດ** ໃຫ້ລູກຂອງຂ້າພະເຈົ້າໃຊ້ email ຂອງນັກຮຽນທີ່ກ່າວມາຂ້າງເທິງນີ້ທີ່ຈັດຫາໃຫ້ໂດຍໂຮງຮຽນ
______ ຂ້າພະເຈົ້າ **ບໍ່ອະນຸຍາດ** ໃຫ້ລູກຂອງຂ້າພະເຈົ້າໃຊ້ email ທີ່ກ່າວມາຂ້າງເທິງນີ້ທີ່ຈັດຫາໃຫ້ໂດຍໂຮງຮຽນ

| ____________________ | ____________________ | ____________ |
|---|---|---|
| ລາຍເຊັນຂອງນັກຮຽນ | ລາຍເຊັນຂອງພໍ່ແມ່ | ວັນທີ |

**LAO** 4866